ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ກົມການນໍາເຂົ້າ ແລະ ສົ່ງອອກ

ເລກທີ 3320 /ກຂອ.ບຂອ

ນະຄອນຫຼວງວຽງຈັນ, ວັນທີ 30 ຕຸລາ 2020

# ຄໍາແນະນໍາ

ເຖິງ : - ທ່ານ ປະທານສະມາຄົມນໍ້າມັນເຊື້ອໄຟ ແລະ ອາຍແກັສ.

- ບັນດາ ບໍລິສັດ ນໍາເຂົ້າ ແລະ ສົ່ງອອກ ນໍ້າມັນເຊື້ອໄຟ, ນໍ້າມັນເຄື່ອງ ແລະ ອາຍແກັສຫຸງຕົ້ມ.

ເລື່ອງ : ການນໍາໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ເຂົ້າໃນການຄຸ້ມຄອງການນໍາເຂົ້ານໍ້າມັນເຊື້ອໄຟ, ນໍ້າມັນເຄື່ອງ ແລະ ອາຍແກັສຫຸງຕົ້ມ ຢູ່ ດ່ານພາສີສາກົນຂົວມິດຕະພາບ 1 (ນະຄອນຫຼວງວຽງຈັນ).

- ອີງຕາມ ແຈ້ງການ ຂອງ ຫ້ອງການ, ກະຊວງການເງິນ, ເລກທີ 1573/ຫກງ, ລົງວັນທີ 05 ສິງຫາ 2020 ກ່ຽວກັບການນໍາໃຊ້ລະບົບແຈ້ງພາສີປະຕູດຽວ (Lao National Single Window) ເຂົ້າໃນການຄຸ້ມຄອງການນໍາເຂົ້າສິນຄ້າທົ່ວໄປ ແລະ ນໍ້າມັນເຊື້ອໄຟ ຢູ່ ດ່ານພາສີສາກົນຂົວມິດຕະພາບ 1.
- ອີງຕາມ ແຈ້ງການ ຂອງກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ, ເລກທີ 2687 ກຂອ.ບຂອ, ລົງວັນທີ 01 ກັນຍາ 2020 ກ່ຽວກັບການນໍາໃຊ້ລະບົບແຈ້ງພາສີປະຕູດຽວ (Lao National Single Window) ເຂົ້າໃນການຄຸ້ມຄອງການນໍາເຂົ້າສິນຄ້າທົ່ວໄປ ແລະ ນໍ້າມັນເຊື້ອໄຟ ຢູ່ ດ່ານພາສີສາກົນຂົວມິດຕະພາບ 1.
- ອີງຕາມ ກອງປະຊຸມປຶກສາຫາລືກ່ຽວກັບ ການນໍາໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ເຂົ້າໃນການຄຸ້ມຄອງການນໍາເຂົ້ານໍ້າມັນເຊື້ອໄຟ, ນໍ້າມັນເຄື່ອງ ແລະ ອາຍແກັສຫຸງຕົ້ມ, ຄັ້ງວັນທີ 16 ຕຸລາ 2020.

ເພື່ອຮັບປະກັນການນໍາໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ໃນການອອກອະນຸຍາດປະເພດນໍ້າມັນເຊື້ອໄຟ, ນໍ້າມັນເຄື່ອງ ແລະ ອາຍແກັສຫຸງຕົ້ມ ໃນໄລຍະ 2 ເດືອນຂ້າມຜ່ານທ້າຍປີ 2020 ໃຫ້ມີຄວາມເປັນເອກະພາບ ແລະ ໄດ້ຮັບຄວາມສະດວກໃນການນໍາໃຊ້ລະບົບ (LNSW) ແລະ ຮັບປະກັນການຄຸ້ມຄອງການນໍາເຂົ້າສິນຄ້າດັ່ງກ່າວ, ກົມການນໍາເຂົ້າ ແລະ ສົ່ງອອກ (ກົມ ຂອ) ຈຶ່ງອອກ ຄໍາແນະນໍາ ມາຍັງ ທ່ານ ເພື່ອປະຕິບັດດັ່ງນີ້:

1. ໃຫ້ ບໍລິສັດ ນໍາເຂົ້າ ແລະ ສົ່ງອອກ ປະເພດນໍ້າມັນເຊື້ອໄຟ, ນໍ້າມັນເຄື່ອງ ແລະ ອາຍແກັສຫຸງຕົ້ມ ສົມທົບກັບເຈົ້າໜ້າທີ່ພາສີປະຈໍາດ່ານພາສີສາກົນຂົວມິດຕະພາບ1 (ນະຄອນຫຼວງວຽງຈັນ) ເພື່ອຢັ້ງຢືນຕົວເລກທີ່ຍັງເຫຼືອຈາກຈໍານວນ ທີ່ໄດ້ຮັບອະນຸຍາດຈາກກົມການນໍາເຂົ້າ ແລະ ສົ່ງອອກ. ຫຼັງຈາກນັ້ນ, ນໍາເອົາຕົວເລກດັ່ງກ່າວ ສະໜອງໃຫ້ ບໍລິສັດ ຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ ຈໍາກັດ ປ້ອນເຂົ້າໃສ່ໃນລະບົບແຈ້ງພາສີປະຕູດຽວ (LNSW).

2. ສຳລັບ ການນຳເຂົ້າເພີ່ມເຕີມ ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອາຍແກັສຫຸງຕົ້ມ ໃນໄລຍະ 2 ເດືອນທ້າຍ ປີ 2020 ແລະ ສົກປີ 2021 ແມ່ນໃຫ້ສະເໜີຜ່ານລະບົບ (LNSW) ໄດ້ເລີຍຕາມ ແຈ້ງການ ເລກທີ 2687ກຂອ.ບຂອ, ລົງວັນທີ 01 ກັນຍາ 2020.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມ,

ກົມການນຳເຂົ້າແລະສົ່ງອອກ

ນ. ມະນີວອນ ວົງໄຊ